# KAISER PERMANENTE
# ບົດສະຫຼຸບນະໂຍບາຍຂອງ ຊ່ວຍເຫຼືອທາງການເງິນສຳລັບການປິ່ນປົວພະຍາດ

ໂຄງການ ຊ່ວຍເຫຼືອທາງການເງິນສຳລັບການປິ່ນປົວພະຍາດ (Medical Financial Assistance, MFA) ຂອງ Kaiser Permanente ໃຫ້ການຊ່ວຍເຫຼືອດ້ານການເງິນ ໃຫ້ແກ່ຄົນເຈັບທີ່ມີຄຸນສົມບັດພຽງພໍ ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຈ່າຍຄ່າປິ່ນປົວສຸກເສີນ ຫຼື ມີຄວາມຈຳເປັນທາງການແພດ ທີ່ພວກເຂົາໄດ້ຮັບໃນສະຖານທີ່ປິ່ນປົວຂອງ Kaiser Permanente ຫຼື ໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente. ຄົນເຈັບສາມາດສະໝັກເຂົ້າຮ່ວມໂຄງການ MFA ດ້ວຍຫຼາຍຊ່ອງທາງ ລວມທັງທາງອອນລາຍ, ດ້ວຍຕົນເອງ, ທາງໂທລະສັບ ຫຼື ໂດຍການຕື່ມຂໍ້ມູນ ແລະ ການຍື່ນໃບສະໝັກ. ຄົນເຈັບຕ້ອງບັນລຸໄດ້ຕາມເງື່ອນໄຂໃນການມີສິດໄດ້ຮັບຕ່າງໆຢູ່ຂ້າງລຸ່ມນີ້ ເພື່ອເຮັດໃຫ້ມີຄຸນສົມບັດພຽງພໍ.

**ແມ່ນໃຜທີ່ມີສິດເຂົ້າຮ່ວມໂຄງການ Financial Assistance ແລະມີເງື່ອນໄຂທີ່ຕ້ອງການຫຍັງແດ່?**
ໂຄງການດັ່ງກ່າວຊ່ວຍເຫຼືອຄົນເຈັບທີ່ມີລາຍໄດ້ຕໍ່າ, ບໍ່ມີປະກັນໄພ ຫຼື ດ້ອຍໂອກາດ ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຈ່າຍຄ່າດູແລທາງການແພດທັງໝົດ ຫຼື ບາງສ່ວນ. ໂດຍທົ່ວໄປແລ້ວ, ຄົນເຈັບມີສິດເຂົ້າຮ່ວມໂຄງການຊ່ວຍເຫຼືອທາງການເງິນ ເມື່ອລາຍໄດ້ທັງໝົດຂອງຄົວເຮືອນຂອງພວກເຂົາແມ່ນຢູ່ທີ່ ຫຼື ຕໍ່າກວ່າ 400% ຂອງຄຳແນະນຳກ່ຽວກັບຄວາມທຸກຍາກຂອງລັດຖະບານກາງ (Federal Poverty Guidelines, FPG) ຫຼື ມີຄ່າໃຊ້ຈ່າຍດ້ານການປິ່ນປົວທີ່ສູງກວ່າປົກກະຕິ. ຄົນເຈັບຄວນປຶກສາກັບທີ່ປຶກສາທາງດ້ານການເງິນ ເພື່ອກຳນົດການມີສິດໄດ້ຮັບ ແລະ ການຊ່ວຍເຫຼືອໃນການສະໝັກ.

*ຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນໃນການປິ່ນປົວ ຈະບໍ່ຖືກຮຽກເກັບຄ່າບໍລິການເກີນຈຳນວນເງິນທີ່ໄດ້ຖືກຮຽກເກັບທົ່ວໄປ (Amounts Generally Billed, AGB) ສຳລັບການປິ່ນປົວສຸກເສີນ ຫຼື ມີຄວາມຈຳເປັນທາງການແພດອື່ນໆ. ເຂົ້າເບິ່ງ* kp.org/mfa/nw *ສຳລັບຂໍ້ມູນກ່ຽວກັບ AGB.*

**Kaiser Permanente ມີການຄັດເລືອກຄົນເຈັບ ສຳລັບການມີສິດເຂົ້າຮ່ວມໂຄງການຂອງລັດ ແລະ ເອກະຊົນບໍ?**
Kaiser Permanente ໃຫ້ການຊ່ວຍເຫຼືອຄົນເຈັບໃນການກຳນົດໂຄງການຄຸ້ມຄອງສຸຂະພາບຂອງລັດ ແລະ ເອກະຊົນທີ່ເປັນໄປໄດ້ ທີ່ອາດຈະຊ່ວຍໃນການເຂົ້າເຖິງຄວາມຕ້ອງການໃນການດູແລສຸຂະພາບ. ຄົນເຈັບທີ່ຖືກພິຈາລະນາວ່າມີເງື່ອນໄຂເຂົ້າຮ່ວມໂຄງການຄຸ້ມຄອງສຸຂະພາບຂອງລັດ ຫຼື ເອກະຊົນໃດໜຶ່ງແມ່ນຕ້ອງໄດ້ສະໝັກ ເຂົ້າໃນໂຄງການເຫຼົ່ານັ້ນ.

**ໂຄງການໃຫ້ການຄຸ້ມຄອງຫຍັງແດ່?**
ໂຄງການ Medical Financial Assistance ຄຸ້ມຄອງທັງໝົດ ຫຼື ບາງສ່ວນຂອງການປິ່ນປົວທີ່ຈຳເປັນທາງການແພດທີ່ສະໜອງໃຫ້ຢູ່ທີ່ສຳນັກງານທາງການແພດ, ໂຮງໝໍ, ຮ້ານຂາຍຢາຂອງ Kaiser Permanente ຫຼື ທີ່ສະໜອງໃຫ້ໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente. ປະເພດການບໍລິການຕ່າງໆ ທີ່ບໍ່ໄດ້ຮັບການຄຸ້ມຄອງປະກອບມີ ການບໍລິການທີ່ບໍ່ໄດ້ຮັບການພິຈາລະນາວ່າເປັນກໍລະນີສຸກເສີນ ຫຼື ຈຳເປັນທາງການແພດໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente, ການບໍລິການຮັກສາການມີບຸດຍາກ ແລະ ການອຸ້ມບຸນ ພ້ອມທັງເບ້ຍປະກັນການດູແລສຸຂະພາບ. ກະລຸນາເບິ່ງບັນຊີລາຍຊື່ທັງໝົດເພີ່ມຕື່ມໃນນະໂຍບາຍຂອງ MFA.

**ມີການຊ່ວຍເຫຼືອດ້ານພາສາບໍ?**
ມີນາຍແປພາສາໃຫ້ທ່ານໂດຍບໍ່ເສຍຄ່າ. ໃບຄຳຮ້ອງຂໍສະໝັກ, ນະໂຍບາຍ ແລະ ບົດສະຫຼຸບນະໂຍບາຍນີ້ຂອງໂຄງການ Medical Financial Assistance ອາດຈະມີເປັນພາສາຂອງທ່ານ. ສຳລັບຂໍ້ມູນເພີ່ມຕື່ມ, ໂທ 800-324-8010 ຫຼື ເຂົ້າເບິ່ງເວັບໄຊຂອງພວກເຮົາທີ່ kp.org/mfa/nw.

**Kaiser Permanente ມີນະໂຍບາຍກ່ຽວກັບການຊ່ວຍເຫຼືອດ້ານການເງິນບໍ?**
ທ່ານອາດຈະຂໍເອົານະໂຍບາຍຂອງ Medical Financial Assistance ຂອງ Kaiser Permanente ສະບັບສຳເນົາຂອງທ່ານໂດຍບໍ່ເສຍຄ່າ ໂດຍການໂທຫາ 800-813-2000, ສົ່ງຈົດໝາຍທາງໄປສະນີໄປທີ່ 500 NE Multnomah Street, Suite 100, Portland, OR 97232, ຫຼື ເຂົ້າເບິ່ງເວັບໄຊຂອງພວກເຮົາໄດ້ທີ່ kp.org/mfa/nw.

**ຕ້ອງການຄວາມຊ່ວຍເຫຼືອບໍ?**
ສຳລັບການຊ່ວຍເຫຼືອ ຫຼື ສອບຖາມກ່ຽວກັບຂັ້ນຕອນການສະໝັກ Medical Financial Assistance, ກະລຸນາໂທ 800-813-2000, ຫຼື ຫາລືກັບທີ່ປຶກສາດ້ານການເງິນ ທີ່ຢູ່ໃກ້ ການບໍລິການທຸລະກິດການເຂົ້າເຖິງຄົນເຈັບ ທີ່ໂຮງໝໍໃດໜຶ່ງຂອງ Kaiser Permanente.

**ຂ້າພະເຈົ້າຈະສະໝັກໄດ້ແນວໃດ?**
ທ່ານສາມາດສະໝັກ Medical Financial Assistance ໄດ້ໃນຫຼາຍຊ່ອງທາງ ທາງອອນລາຍ, ຂໍຂໍ້ມູນກ່ຽວກັບໂຄງການ, ດ້ວຍຕົນເອງ, ໂທລະສັບ ຫຼື ຮ້ອງຂໍເອົາເອກະສານຈາກ ແຫຼ່ງຕ່າງໆ ໃດໜຶ່ງຕໍ່ໄປນີ້:

- ທາງອອນລາຍ ທີ່ kp.org/mfa/nw
- ທີ່ປຶກສາດ້ານການເງິນໃກ້ກັບ ການບໍລິການທຸລະກິດການເຂົ້າເຖິງຄົນເຈັບ ທີ່ໂຮງໝໍໃດໜຶ່ງຂອງ Kaiser Permanente
- ໂທຫາ 800-813-2000
- ທາງໄປສະນີ (ໂດຍບໍ່ເສຍຄ່າ) ທີ່ 500 NE Multnomah Street, Suite 100, Portland, OR 97232
- ດາວໂຫຼດໃບຄຳຮ້ອງຂໍສະໝັກຜ່ານເວັບໄຊຊຸມຊົນຂອງ Kaiser Permanente ທີ່ kp.org/mfa/nw.

ກະລຸນາສົ່ງໃບສະໝັກທີ່ຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວ (ລວມທັງເອກະສານ ແລະ ຂໍ້ມູນທີ່ຕ້ອງການທັງ ໝົດ ທີ່ລະບຸໄວ້ໃນຄຳແນະນຳໃນການສະໝັກ) ກັບຄືນໃຫ້ບ່ອນລົງທະບຽນຂອງໂຮງໝໍ Kaiser Permanente ຫຼື ສົ່ງໃບຄຳຮ້ອງຂໍສະໝັກໄປທີ່: MFA Program, 500 NE Multnomah Street, Suite 100, Portland, OR 97232.

Kaiser Permanente ຈະກວດກາບັນດາຄຳຮ້ອງຂໍສະໝັກທີ່ສົ່ງມາ ເມື່ອຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວ ແລະ ຈະຕັດສິນວ່າທ່ານມີສິດໄດ້ຮັບຕາມນະໂຍບາຍຂອງ Medical Financial Assistance ຂອງ Kaiser Permanente ຫຼືບໍ່. ຄຳຮ້ອງຂໍສະໝັກທີ່ບໍ່ຄົບຖ້ວນອາດຈະເຮັດໃຫ້ການດຳເນີນການ ຫຼື ການປະຕິເສດຄຳຮ້ອງຂໍສະໝັກ MFA ຂອງທ່ານມີຄວາມຊັກຊ້າ, ແຕ່ Kaiser Permanente ຈະແຈ້ງໃຫ້ບັນດາຜູ້ສະໝັກຊາບ ແລະ ໃຫ້ໂອກາດໃນການສົ່ງເອກະສານ ຫຼື ຂໍ້ມູນທີ່ຂາດຫາຍໄປ ພາຍໃນກຳນົດເວລາທີ່ກຳນົດໄວ້.

©2021 Kaiser Foundation Hospital;
Kaiser Foundation Health Plan of the Northwest.